**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

ເລກທີ 754 /ວທ

ນະຄອນຫຼວງວຽງຈັນ, ວັນທີ 20 ສິງຫາ 2025

# ຂໍ້ຕົກລົງ
# ວ່າດ້ວຍ ການທ່ອງທ່ຽວປອດຄວັນຢາສູບ

- ອີງຕາມ ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 09/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ ສະບັບເລກທີ 52/ລບ, ລົງວັນທີ 21 ກຸມພາ 2019;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ສະບັບເລກທີ 417/ຄທທ, ລົງວັນທີ 17 ມິຖຸນາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ໃນຂົງເຂດການທ່ອງທ່ຽວ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຫຼຸດຜ່ອນ ການຊົມໃຊ້ຢາສູບທຸກຮູບແບບ, ປົກປັກຮັກສາສິ່ງແວດລ້ອມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

### ມາດຕາ 2 ການທ່ອງທ່ຽວປອດຄວັນຢາສູບ

ການທ່ອງທ່ຽວປອດຄວັນຢາສູບ ແມ່ນການຄວບຄຸມ ແລະ ຫ້າມ ການສູບຢາທຸກຮູບແບບ ໃນຂົງເຂດການທ່ອງທ່ຽວ ເພື່ອປົກປ້ອງສຸຂະພາບຂອງ ນັກທ່ອງທ່ຽວ ຈາກຄວັນຢາສູບ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. **ເຂດປອດຄວັນຢາສູບ** ໝາຍເຖິງ ສະຖານທີ່ ທີ່ໄດ້ກຳນົດ ແລະ ຕິດເຄື່ອງໝາຍ ຫຼື ແຜ່ນປ້າຍ ຫ້າມ ແລະ ອະນຸຍາດ ສູບຢາ;

2. **ຂົງເຂດການທ່ອງທ່ຽວ** ໝາຍເຖິງ ສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກແຮມ, ສະຖານທີ່ບັນເທີງ, ຮ້ານອາຫານ, ສະຖານທີ່ບໍລິການສົ່ງເສີມສຸຂະພາບ, ການບໍລິການນຳທ່ຽວ, ພະນັກງານນຳທ່ຽວ, ສະຖານທີ່ຂາຍເຄື່ອງທີ່ລະນຶກ ແລະ ສຳນັກງານຂອງລັດທີ່ກ່ຽວຂ້ອງກັບການທ່ອງທ່ຽວ;

3. **ສະຖານທີ່ພັກແຮມ** ໝາຍເຖິງ ສະຖານທີ່ພັກ ຂອງ ນັກທ່ອງທ່ຽວ, ນັກເດີນທາງ ແລະ ບຸກຄົນທົ່ວໄປ ທີ່ມີຈຸດປະສົງພັກຜ່ອນ ນອນແຮມຄືນ ຫຼື ແຮມວັນ ຊຶ່ງມີລະບົບໂຄງສ້າງ ເປັນ ຕຶກ, ອາຄານ, ຮ້ານ, ຫ້ອງ, ຕູບ ແລະ ສະຖານທີ່ພັກແຮມອື່ນ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ ຊຶ່ງອາດມີ ຫຼື ບໍ່ມີການບໍລິການອາຫານ ແລະ ເຄື່ອງດື່ມ;

4. **ສະຖານທີ່ບັນເທີງ** ໝາຍເຖິງ ສະຖານທີ່ບໍລິການໃຫ້ຄວາມເບີກບານມ່ວນຊື່ນ, ຄວາມສຸກສັນດ້ວຍສຽງດົນຕີ, ສຽງເພງ, ຂັບລຳ, ຕະຫຼົກ, ຟ້ອນ, ສະແດງລະຄອນ ແລະ ອື່ນໆ ທີ່ອາດຈັດຂຶ້ນຢູ່ໃນສະຖານທີ່ບັນເທີງສະເພາະ, ສະຖານທີ່ພັກແຮມ, ຮ້ານອາຫານ, ພັດຕາຄານ, ສວນອາຫານ ຫຼື ສະຖານທີ່ບັນເທີງກາງແຈ້ງ;

5. **ຮ້ານອາຫານ** ໝາຍເຖິງ ສະຖານທີ່ບໍລິການອາຫານ ຊຶ່ງມີລະບົບໂຄງສ້າງເປັນ ຕຶກ, ອາຄານ, ຫ້ອງ, ສວນອາຫານ, ພັດຕາຄານ, ຮ້ານອາຫານປະຈຳເຮືອແພ, ລົດ ຫຼື ຍານພາຫະນະອື່ນ ໂດຍມີການຕົບແຕ່ງສວຍງາມຕາມຍຸກສະໄໝ ຂອງຄ່ານິຍົມ, ມີຫຼາກຫຼາຍຮູບແບບ ແລະ ລະດັບທີ່ແຕກຕ່າງກັນ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ, ມີສິ່ງອຳນວຍຄວາມສະດວກດ້ານການບໍລິການອາຫານ ທີ່ມີຄຸນນະພາບ, ໄດ້ມາດຕະຖານ ສະອາດ ແລະ ປອດໄພ;

6. **ສະຖານທີ່ບໍລິການສົ່ງເສີມສຸຂະພາບ** ໝາຍເຖິງ ສະຖານທີ່ໃຫ້ບໍລິການ ນວດ, ສະປາ ແລະ ຮົມຢາພື້ນເມືອງ;

7. **ການບໍລິການນຳທ່ຽວ** ໝາຍເຖິງ ທຸລະກິດບໍລິການນຳທ່ຽວ, ການບໍລິການຂົນສົ່ງນັກທ່ອງທ່ຽວ, ທຸລະກິດຕົວແທນການທ່ອງທ່ຽວ ແລະ ພະນັກງານນຳທ່ຽວ;

8. **ນັກທ່ອງທ່ຽວ** ໝາຍເຖິງ ບຸກຄົນ ທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການທ່ອງທ່ຽວ, ການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ, ການສະແຫວງບຸນ ແລະ ກິດຈະກຳອື່ນ ໂດຍບໍ່ມີຈຸດປະສົງອາໄສຢູ່ປະຈຳ, ຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ;

9. **ພາຍໃນອາຄານ** ໝາຍເຖິງ ສະຖານທີ່ ທີ່ມຸງດ້ວຍຫຼັງຄາ, ແອ້ມດ້ວຍຝາ ຫຼື ບໍ່ມີຝາ ຖາວອນ ຫຼື ຊົ່ວຄາວ ລວມທັງ ລະບຽງ, ລິຟ, ຂັ້ນໄດ, ບ່ອນຮັບແຂກ, ອາຄານຕໍ່ເຕີມ, ຫ້ອງອາຫານ, ຫ້ອງນ້ຳ, ຫ້ອງນັ່ງຫຼິ້ນ, ເທີບ, ຕູບ ແລະ ອື່ນໆ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານການທ່ອງທ່ຽວປອດຄວັນຢາສູບ**

ການເຄື່ອນໄຫວ ວຽກງານການທ່ອງທ່ຽວປອດຄວັນຢາສູບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນພັດທະນາການທ່ອງທ່ຽວ ຂອງ ສປປ ລາວ;

2. ຮັບປະກັນ ການປະຕິບັດການກຳນົດເຂດຫ້າມ ແລະ ອະນຸຍາດໃຫ້ສູບຢາ ຢ່າງເຂັ້ມງວດ;

3. ຮັບປະກັນການທ່ອງທ່ຽວໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

4. ຮັບປະກັນ ການປະສານສົມທົບ ແລະ ຮ່ວມມືກັບຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

**ມາດຕາ 5 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານ ການທ່ອງທ່ຽວປອດຄວັນຢາສູບ ຢູ່ ສປປ ລາວ.

## ໝວດທີ 2
## ການກຳນົດເຂດ ແລະ ການຕິດເຄື່ອງໝາຍ

**ມາດຕາ 6 ການກຳນົດເຂດ**

ການກຳນົດເຂດ ແມ່ນການກຳນົດສະຖານທີ່ຫ້າມສູບຢາ ແລະ ການຈັດສະຖານທີ່ອະນຸຍາດໃຫ້ສູບຢາ ຊຶ່ງພາກສ່ວນທີ່ກ່ຽວຂ້ອງ ຕ້ອງກຳນົດເຂດ ອະນຸຍາດສູບຢາ ແລະ ຫ້າມສູບຢາ ຢ່າງຊັດເຈນ.

**ມາດຕາ 7 ສະຖານທີ່ຫ້າມສູບຢາ**

ສະຖານທີ່ຫ້າມສູບຢາ ມີ ດັ່ງນີ້:

1. ພາຍໃນສະຖານທີ່ທ່ອງທ່ຽວ ເປັນຕົ້ນ ຈຸດຊົມວິວ, ບ່ອນພັກຜ່ອນ, ບ່ອນທີ່ມີນັກທ່ອງທ່ຽວຫຼາຍ, ສວນສາທາລະນະ;

2. ສະຖານທີ່ພາຍໃນອາຄານ ເປັນຕົ້ນ ສະຖານທີ່ພັກແຮມທຸກປະເພດ, ຮ້ານອາຫານທຸກປະເພດ, ສະຖານທີ່ບໍລິການບັນເທີງທຸກປະເພດ, ສະຖານທີ່ບໍລິການສົ່ງເສີມສຸຂະພາບທຸກປະເພດ, ສຳນັກງານຂອງລັດ;

3. ພາຫະນະບໍລິການຂົນສົ່ງນັກທ່ອງທ່ຽວ ເປັນຕົ້ນ ເຮືອບິນ, ລົດ, ລົດໄຟ, ເຮືອ;

4. ຫ້ອງນ້ຳສາທາລະນະ ຢູ່ໃນສະຖານທີ່ທ່ອງທ່ຽວ;

5. ສະຖານທີ່ອື່ນ ທີ່ມີເຄື່ອງໝາຍ ແລະ ແຜ່ນປ້າຍຫ້າມສູບຢາ.

**ມາດຕາ 8 ການຈັດສະຖານທີ່ສູບຢາ**

ການຈັດສະຖານທີ່ສູບຢາ ຕ້ອງປະຕິບັດ ດັ່ງນີ້:

1. ຢູ່ນອກອາຄານ ແລະ ຫ່າງຈາກຕົວອາຄານ ຢ່າງໜ້ອຍ 10 ແມັດ (ສິບແມັດ);

2. ມີເຄື່ອງໝາຍຊີ້ບອກເຂດສູບຢາ ສະແດງໄວ້ຢ່າງຊັດເຈນ;

3. ບໍ່ມີຫຼັງຄາ ແລະ ຝາແອ້ມ;

4. ມີຖາດເຂ່ຍຂີ້ກອກຢາ;

5. ບໍ່ຢູ່ໃນບໍລິເວນທາງ ເຂົ້າ-ອອກ ຂອງສະຖານທີ່;

6. ມີພື້ນທີ່ຊັດເຈນ ທີ່ສາມາດລະບາຍອາກາດໄດ້ເໝາະສົມ ແລະ ບໍ່ກໍ່ໃຫ້ເກີດຄວາມເດືອດຮ້ອນແກ່ບຸກຄົນອື່ນ;

7. ຕິດສື່ໂຄສະນາ ແລະ ຄຳແນະນຳ ກ່ຽວກັບຄວາມອັນຕະລາຍ ແລະ ການຫຼຸດຜ່ອນການຊົມໃຊ້ຜະລິດຕະພັນຢາສູບ.

**ມາດຕາ 9 ການຕິດເຄື່ອງໝາຍ**

ເຄື່ອງໝາຍ ຫຼື ແຜ່ນປ້າຍ ຫ້າມ ແລະ ອະນຸຍາດ ສູບຢາ ຕ້ອງມີຂໍ້ຄວາມເປັນ ພາສາລາວ, ພາສາອັງກິດ ຫຼື ພາສາອື່ນ ທີ່ຊັດເຈນ, ມີສັນຍາລັກ ຫ້າມ ຫຼື ອະນຸຍາດ ສູບຢາ ຕິດໄວ້ຢູ່ສະຖານທີ່ ທີ່ສາມາດເຫັນໄດ້ງ່າຍ ແລະ ຊັດເຈນ ໂດຍສະເພາະ ຢູ່ບໍລິເວນທາງ ເຂົ້າ-ອອກ ຂອງສະຖານທີ່, ຫ້ອງຮັບແຂກ, ຫ້ອງນອນ, ຫ້ອງນໍ້າ, ຫ້ອງອາຫານ, ຫ້ອງບັນເທີງ, ຫ້ອງນັ່ງຫຼິ້ນ ແລະ ຕາມຈຸດສຳຄັນອື່ນ.

## ໝວດທີ 3
## ສິດ ແລະ ພັນທະ

**ມາດຕາ 10 ສິດ ແລະ ພັນທະ ຂອງບຸກຄົນ ແລະ ນັກທ່ອງທ່ຽວ**

ບຸກຄົນ ແລະ ນັກທ່ອງທ່ຽວ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສູບຢາໃນສະຖານທີ່ ທີ່ຖືກຈັດສັນ ມີເຄື່ອງໝາຍ ແລະ ແຜ່ນປ້າຍອະນຸຍາດສູບຢາ;
2. ລາຍງານເຈົ້າໜ້າທີ່ ເມື່ອພົບເຫັນປາກົດການຫຍໍ້ທໍ້, ການລະເມີດ ຊຶ່ງອາດມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ;
3. ເຄົາລົບ ແລະ ປະຕິບັດ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ຂອງສະຖານທີ່ ແລະ ບ່ອນທ່ຽວຊົມ;
4. ປົກປັກຮັກສາ ສະຖານທີ່ທ່ອງທ່ຽວ, ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ;
5. ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຂອງວິສາຫະກິດການທ່ອງທ່ຽວ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ຕົນ;
6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 11 ສິດ ແລະ ພັນທະ ຂອງຫົວໜ່ວຍທຸລະກິດ**

ຫົວໜ່ວຍທຸລະກິດການທ່ອງທ່ຽວ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມ ການອະນຸຍາດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບວຽກງານການທ່ອງທ່ຽວປອດຄວັນຢາສູບ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານການທ່ອງທ່ຽວປອດຄວັນຢາສູບ;
5. ໂຄສະນາເຜີຍແຜ່, ໃຫ້ຂໍ້ມູນຂ່າວສານ ເຖິງຜົນຮ້າຍຂອງຄວັນຢາສູບ ແລະ ການສູບຢາ;
6. ຈຳກັດ ບ່ອນຊື້-ຂາຍ ຢາສູບ, ຄວັນຢາສູບ ແລະ ການສູບຢາ ທຸກຊະນິດ ໃນສະຖານທີ່ທ່ອງທ່ຽວ;
7. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງການຄຸ້ມຄອງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
8. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມເສຍປະໂຫຍດ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ໝວດທີ 4
# ຂໍ້ຫ້າມ

**ມາດຕາ 12 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສະໜັບສະໜູນການໂຄສະນາ ແລະ ສົ່ງເສີມໃຫ້ຊົມໃຊ້ຜະລິດຕະພັນຢາສູບ;
2. ສູບຢາໃນສະຖານທີ່ຫ້າມສູບຢາ;
3. ໃຫ້ເດັກທີ່ມີອາຍຸຕໍ່າກວ່າ 18 ປີ (ສິບແປດປີ) ຊົມໃຊ້, ຊື້-ຂາຍ ຜະລິດຕະພັນຢາສູບ;
4. ໂຄສະນາຜະລິດຕະພັນຢາສູບທຸກຮູບແບບໃນສະຖານທີ່ທ່ອງທ່ຽວ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 13 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາ, ຊຸກຍູ້, ສົ່ງເສີມ, ຈຳໜ່າຍ, ຊື້-ຂາຍ ຜະລິດຕະພັນຢາສູບ ລວມທັງສະແດງຂໍ້ຄວາມ ຫຼື ສັນຍາລັກ ເພື່ອປຸກລະດົມໃຫ້ຊົມໃຊ້ຜະລິດຕະພັນຢາສູບທຸກຮູບແບບ ໃນສະຖານທີ່ທ່ອງທ່ຽວ;
2. ປ່ອຍປະລະເລີຍ, ເມີນເສີຍ ຕໍ່ການກຳນົດເຂດຫ້າມສູບຢາ ແລະ ອະນຸຍາດສູບຢາ;
3. ບັງຄັບ, ນາບຂູ່, ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າທີ່ ທີ່ກ່ຽວຂ້ອງ;
5. ແຊກແຊງການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ໃນການຄວບຄຸມຢາສູບ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 14 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຜູ້ອື່ນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ;
3. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ;
4. ສົ່ງເສີມ, ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ດຳເນີນທຸລະກິດທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ອະນຸຍາດ ໃຫ້ມີການໂຄສະນາ ແລະ ສົ່ງເສີມ ການນຳໃຊ້ຜະລິດຕະພັນຢາສູບທຸກຮູບແບບ ໃນສະຖານທີ່ທ່ອງທ່ຽວ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ໝວດທີ 5
# ການຄຸ້ມຄອງ ແລະ ກວດກາ ວຽກງານການທ່ອງທ່ຽວປອດຄວັນຢາສູບ

**ມາດຕາ 15 ການຄຸ້ມຄອງ ແລະ ກວດກາ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະ ກວດກາ ວຽກງານການທ່ອງທ່ຽວປອດຄວັນຢາສູບ ຢ່າງລວມສູນ ແລະ ເປັນເອກະພາບທົ່ວປະເທດ ໂດຍມອບໃຫ້ ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ, ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ນະຄອນຫຼວງ, ແຂວງ ແລະ ຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບ ຂະແໜງການສາທາລະນະສຸກ, ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ.

ອົງການຄຸ້ມຄອງວຽກງານການທ່ອງທ່ຽວປອດຄວັນຢາສູບ ປະກອບດ້ວຍ:

1. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;
2. ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ນະຄອນຫຼວງ, ແຂວງ;
3. ຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວ ເມືອງ, ນະຄອນ.

ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການທ່ອງທ່ຽວ.

**ມາດຕາ 16 ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານການທ່ອງທ່ຽວປອດຄວັນຢາສູບ;

2. ການດຳເນີນທຸລະກິດ ເປັນຕົ້ນ ກວດກາເອກະສານ ແລະ ລົງກວດກາການເຄື່ອນໄຫວຕົວຈິງຢູ່ກັບທີ່;

3. ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານການທ່ອງທ່ຽວປອດຄວັນຢາສູບ;

4. ການປະຕິບັດມາດຕະການຕ່າງໆ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 17 ຮູບການກວດກາ**

ຮູບການການກວດກາ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາ ແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

# ໝວດທີ 6
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ມາດຕະການຕໍ່ກັບຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ ແລະ ປັບໃໝ ດັ່ງນີ້:

1. ໃນກໍລະນີ ເປັນການກະທຳຜິດຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ, ກ່າວເຕືອນ ດ້ວຍຮູບການ ແລະ ວິທີການ ຕາມກົດໝາຍ ພ້ອມທັງແຈ້ງເຫດຜົນ ແລະ ການກະທຳຜິດ ໃຫ້ຮັບຊາບ ແລະ ລົງບັນທຶກໄວ້ເປັນຫຼັກຖານ;

2. ບຸກຄົນ ຫຼື ນິຕິບຸກຄົນ ຫາກລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການໂຄສະນາຜະລິດຕະພັນຢາສູບ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການ ດັ່ງນີ້:

ກ. ຄັ້ງທີໜຶ່ງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 20.000.000ກີບ (ຊາວລ້ານກີບ);

ຂ. ຄັ້ງທີສອງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 40.000.000ກີບ (ສີ່ສິບລ້ານກີບ) ພ້ອມທັງ ໂຈະການດຳເນີນທຸລະກິດຊົ່ວຄາວ;

ຄ. ຄັ້ງທີສາມ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 80.000.000ກີບ (ແປດສິບລ້ານກີບ) ພ້ອມທັງ ຍົກເລີກໃບອະນຸຍາດດຳເນີນທຸລະກິດ ແລະ ດຳເນີນຄະດີຕາມກົດໝາຍ.

3. ເຈົ້າຂອງສະຖານທີ່ ຫຼື ຜູ້ດຳເນີນທຸລະກິດ ຫາກບໍ່ຕິດປ້າຍໃນສະຖານທີ່ຫ້າມສູບຢາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການ ດັ່ງນີ້:

ກ. ຄັ້ງທີໜຶ່ງ: ສຶກສາອົບຮົມ ແລະ ກ່າວເຕືອນ;

ຂ. ຄັ້ງທີສອງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 1.000.000ກີບ (ໜຶ່ງລ້ານກີບ);

ຄ. ຄັ້ງທີສາມ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝ ຄັ້ງລະ 2.000.000ກີບ (ສອງລ້ານກີບ).

4. ບຸກຄົນ ຫາກສູບຢາ ໃນສະຖານທີ່ຫ້າມສູບຢາ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການ ດັ່ງນີ້:

ກ. ຄັ້ງທີໜຶ່ງ: ສຶກສາອົບຮົມ ແລະ ກ່າວເຕືອນ;

ຂ. ຄັ້ງທີສອງ: ປັບໃໝບໍ່ເກີນ 200.000ກີບ (ສອງແສນກີບ);

ຄ. ຄັ້ງທີສາມ: ປັບໃໝ ຄັ້ງລະ 400.000ກີບ (ສີ່ແສນກີບ).

**ມາດຕາ 20 ການຄຸ້ມຄອງ ແລະ ນຳໃຊ້ເງິນປັບໃໝ**

ເງິນປັບໃໝ ທີ່ເກັບໄດ້ຈາກການລະເມີດຂໍ້ຕົກລົງສະບັບນີ້ ແມ່ນມອບໃຫ້ຄັງເງິນແຫ່ງຊາດ ໂດຍແມ່ນຂະແໜງການເງິນ ເປັນຜູ້ຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ. ເງິນປັບໃໝ 70% (ເຈັດສິບສ່ວນຮ້ອຍ) ມອບເຂົ້າງົບປະມານແຫ່ງລັດ ແລະ 30% (ສາມສິບສ່ວນຮ້ອຍ) ມອບເຂົ້າກອງທຶນຄວບຄຸມຢາສູບ ເພື່ອນຳໃຊ້ບໍລິຫານວຽກງານ ດັ່ງນີ້:

1. ນຳໃຊ້ເຂົ້າໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານການປັບໃໝ ແລະ ມາດຕະການຕໍ່ຜູ້ລະເມີດ ຂອງພະນັກງານ ແລະ ເຈົ້າໜ້າທີ່;

2. ບໍລິຫານກ່ຽວກັບວຽກງານຄວບຄຸມຢາສູບ;

3. ຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານຄວບຄຸມຢາສູບ;

4. ວຽກງານອື່ນ ທີ່ກ່ຽວຂ້ອງກັບວຽກງານຄວບຄຸມຢາສູບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເຈົ້າການໃນການຈັດຕັ້ງຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນ ທີ່ກ່ຽວຂ້ອງ.

ບັນດາພະແນກວັດທະນະທຳ ແລະ ການທ່ອງທ່ຽວ ນະຄອນຫຼວງ, ແຂວງ, ຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວ ເມືອງ, ນະຄອນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ພ້ອມຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການທ່ອງທ່ຽວປອດຄວັນຢາສູບ ສະບັບເລກທີ 1154/ຖວທ, ລົງວັນທີ 06 ພະຈິກ 2019 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ
ລັດຖະມົນຕີ

**ສວນສະຫວັນ ວິຍະເກດ**